ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 03 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 17 ມັງກອນ 2019


ສຳນັກງານ ຄຄຊ

ເລກທີ 0072

ວັນທີ 22 JAN 2019

ໂທລະສັບ 021 217770


# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 31/12/2018-04/01/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,36% ທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດ ມີການຂະຫຍາຍຕົວດີຂຶ້ນເຫັນໄດ້ຈາກ ຕົວເລກການຈ້າງງານບໍ່ລວມຂະແໜງການກະສິກຳ ເພີ່ມຂຶ້ນ ຈຳນວນ 312.000 ຄົນ ໃນເດືອນ 12/2018 ຈາກເພີ່ມຂຶ້ນ 176.000 ຄົນ ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 24-28/12/2018 | ອາທິດນີ້ 31/12/2018-04/01/2019 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1442 | 1,1401 | 0,36% |
| ເຢນ/ໂດລາ | 110,34 | 108,01 | 2,16% |
| ບາດ/ໂດລາ | 32,560 | 32,080 | 1,50% |
| ເປໂຊ/ໂດລາ | 52,62 | 52,49 | 0,26% |
| ຣູເປັຍ/ໂດລາ | 14.555,00 | 14.265,00 | 2,03% |
| ໂດລາສິງກະໂປ/ໂດລາ | 1,3676 | 1,3614 | 0,46% |
| ຢວນ/ໂດລາ | 6,8682 | 6,8655 | 0,04% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ເພີ່ມຂຶ້ນ 4,78% ເປັນ 47,98 ໂດລາ/ບາເຣວ ເນື່ອງຈາກພາຍຫຼັງຮັບແຮງກົດດັນຈາກການປັບຫຼຸດປະລິມານການຜະລິດນ້ຳມັນດິບຂອງກຸ່ມໂອເປັກຫຼຸດລົງ ຈຳນວນ 460.000 ບາເຣວ/ວັນ ມາຢູ່ທີ່ລະດັບ 32.68 ລ້ານບາເຣວ/ວັນ ໃນເດືອນ 12/2018, ໃນນັ້ນ, ປະເທດຊາອຸດິອາຣະເບຍ ໄດ້ຫຼຸດປະລິມານການຜະລິດນ້ຳມັນດິບ ຫຼຸດລົງຈາກ 400.000 ບາເຣວ/ວັນ ຊຶ່ງກວມເອົາ 86,96% ຂອງການປັບຫຼຸດປະລິມານການຜະລິດນ້ຳມຫນດິບຂອງໂອເປັກ;
- ລາຄາຄຳ ເພີ່ມຂຶ້ນ 1,03% ເປັນ 1.289,86 ໂດລາ/ອອນ ເນື່ອງຈາກຄວາມຜັນຜວນຂອງຄ່າເງິນໂດລາ ເຮັດໃຫ້ນັກລົງທຶນເຂົ້າຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາ ແຂງຄ່າຂຶ້ນ 0,26% ແຕ່ອ່ອນຄ່າລົງ 0,42% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າຂຶ້ນ 0,35% ທຽບໃສ່ສະກຸນເງິນໂດລາ ແຕ່ ອ່ອນຄ່າລົງ 0,68% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 24-28/12/2018 | | | ອາທິດນີ້ 31/12/2018-04/01/2019 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.591,07 | 8.617,17 | 8.606,88 | 8.570,21 | 8.598,49 | 8.584,25 | 0,24% | 0,22% | 0,26% | 0,37% | 0,34% | 0,35% |
| ບາດ | 266,53 | 268,08 | 267,70 | 267,79 | 269,59 | 268,82 | -0,47% | -0,56% | -0,42% | -0,60% | -0,79% | -0,68% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,14% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີ ຜ່ານມາ ເພີ່ມຂຶ້ນ 13,59%;
- ປະລິມານເງິນ M2 ຫຼຸດລົງ 0,23% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 7,61%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (28/12/2018-03/01/2019) ເຫັນວ່າ ທທກ ຂາຍເງິນໂດລາສຸດທິ 24,79 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 13,67 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 38,46 ລ້ານໂດລາ) ແຕ່ ຂາຍເງິນບາດສຸດທິ 271,54 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 60,96 ລ້ານບາດ ແລະ ຂາຍເງິນບາດໄດ້ 332,50 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ຫຼຸດລົງ 59,75% ແລະ ເງິນບາດ ຫຼຸດລົງ 49,53%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດັດສົມໂດຍການຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 39,00 ລ້ານໂດລາ ແຕ່ດັດສົມໂດຍການຊື້ເງິນງິນບາດສຸດທິ ຈຳນວນ 70,00 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 5,60 ລ້ານໂດລາ ແລະ ເງິນບາດ ຈຳນວນ 20,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີຜ່ານມາ 21-27/12/2018 | | ອາທິດນີ້ 28/12/2018-03/01/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **47,54** | **190,15** | **13,67** | **60,96** | **-71,25%** | **-67,94%** |
| - ທ/ຄທຸລະກິດລັດ | 565,77 | 3.754,13 | 5,77 | 35,35 | -98,98% | -99,06% |
| - ທ/ຄທຸລະກິດອື່ນໆ | -518,23 | -3.563,98 | 7,90 | 25,61 | -101,52% | -100,72% |
| 2. ການຂາຍເງິນຕາຕ່າງປະເທດ | **81,97** | **589,44** | **38,46** | **332,50** | **-53,08%** | **-43,59%** |
| - ທ/ຄທຸລະກິດລັດ | 648,24 | 8.791,04 | 10,63 | 162,70 | -98,36% | -98,15% |
| - ທ/ຄທຸລະກິດອື່ນໆ | -566,27 | -8.201,60 | 27,83 | 169,80 | -104,91% | -102,07% |
| ຊື້-ຂາຍສຸດທິ ທທກ | **-34,43** | **-399,29** | **-24,79** | **-271,54** | **-28,00%** | **-31,99%** |
| - ຜິດດ່ຽງຊື້-ຂາຍ | -72,42% | -209,99% | -181,35% | -445,44% | 150,41% | 112,12% |
| - ມູນຄ່າການຊື້-ຂາຍ | **129,51** | **779,59** | **52,13** | **393,46** | **-59,75%** | **-49,53%** |
| 3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ | **-4,20** | **0,00** | **39,00** | **-70,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 41,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 4,20 | 0,00 | 2,00 | 70,00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **18,33** | **102,08** | **5,60** | **20,00** | | |
| 5. ທຫລ ກັບ ພາກສ່ວນອື່ນໆ | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 01/2019 ຄາດວ່າຈະຢູ່ໃນລະດັບ 1,73%.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼອອກສຸດທິ ຜ່ານລະບົບທະນາຄານ ຈຳນວນ 24,16 ລ້ານໂດລາສະຫະລັດ. ໃນນັ້ນ, ປະຈຳອາທິດວັນທີ (28/12/2018-03/01/2019) ໃນນັ້ນ, ສຳລັບກະແສເງິນໄຫຼອອກ ແມ່ນມີຈຳນວນ 137,69 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າ ຈຳນວນ 114,16 ລ້ານໂດລາສະຫະລັດ, ລາຍຈ່າຍອື່ນໆ ຈຳນວນ 10,14 ລ້ານໂດລາສະຫະລັດ ແລະ ອະນຸພັນທາງການເງິນ ຈຳນວນ 6,39 ລ້ານໂດລາສະຫະລັດ). ສຳລັບກະແສເງິນໄຫຼເຂົ້າ ມີຈຳນວນ 113,54 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການສົ່ງອອກສິນຄ້າ ຈຳນວນ 72,98 ລ້ານໂດລາສະຫະລັດ, ຮັບຈາກການບໍລິການ ຈຳນວນ 23,99 ລ້ານໂດລາສະຫະລັດ ແລະ ຈາກການລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 6,55 ລ້ານໂດລາສະຫະລັດ).

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 444 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 625 ສະບັບ ເທົ່າກັບ 58,47% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 254,85 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 260,22 ຕື້ກີບ ເທົ່າກັບ 50,53%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (28/12/2018-03/01/2019) ມີທັງໝົດ 2.510 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 2.447 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈຳນວນ 846 ຕື້ກີບ ຈາກ 1.909,78 ຕື້ກີບ ມາເປັນ 1.063,42 ຕື້ກີບ ເທົ່າກັບ 44,31%;

- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 63 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈຳນວນ 58,26 ຕື້ກີບ ຈາກ 126,89 ຕື້ກີບ ມາເປັນ 68,63 ຕື້ກີບ ເທົ່າກັບ 45,91%.

**4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 822,15 ຈຸດ ຫຼຸດລົງ ຈາກ 836,45 ຈຸດ ຫຼື ເທົ່າກັບ 1,71% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 21.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 112,720 ລ້ານກີບ ຫຼຸດລົງ 93,34% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 47,19% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ PTL, LCC ແລະ BCEL.

- ພົ້ນເດັ່ນໃນອາທິດນີ້, ແມ່ນໄດ້ອະນຸຍາດໃຫ້ບໍລິສັດ ວຽງຈັນເຊັນເຕີ ມະຫາຊົນ ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ.

**ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)**

| ບໍລິສັດ | ອາທິດກ່ອນ(21-26/12/2018) | | | ອາທິດນີ້(2-3/01/2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (%) |
| **BCEL** | 166.100 | 933.375.000 | 6.150 | **13.600** | **80.775.000** | **5.950** | -91,81 | -91,35 | -3,25 |
| **EDL-GEN** | 3.900 | 15.390.000 | 3.950 | **8.100** | **31.945.000** | **3.900** | 107,69 | 107,57 | -1,27 |
| **LWPC** | - | - | 8.000 | - | - | **8.000** | - | - | - |
| **PTL** | 500 | 760.000 | 1.500 | - | - | **1.350** | -100 | -100 | -10,00 |
| **SVN** | - | - | 1.800 | - | - | **1.800** | - | - | - |
| **PCD** | 100 | 120.000 | 1.200 | - | - | **1.200** | -100 | -100 | - |
| **LCC** | 275.900 | 680.245.000 | 2.600 | - | - | **2.400** | -100 | -100 | -7,69 |
| **MHTL** | 22.200 | 63.130.000 | 2.900 | - | - | **2.900** | -100 | -100 | - |
| **LAT** | 400 | 300.000 | 750 | - | - | **750** | -100 | -100 | - |
| ທັງໝົດ | 469.100 | 1.693.320.000 | | **21.700** | **112.720.000** | | | | |

**5. ວຽກງານອື່ນໆທີ່ພົ້ນເດັ່ນ.**

- **ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມປຶກສາຫາລືກ່ຽວກັບຮ່າງດຳລັດວ່າດ້ວຍກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ; ❷ ກອງປະຊຸມປຶກສາຫາລືກ່ຽວກັບການເຄື່ອນໄຫວວຽກງານຕິດຕາມ ແລະ ກວດກາທະນາຄານທຸລະກິດ;❸ ພິທີສະເຫຼີມສະຫຼອງວັນສ້າງຕັ້ງສະຖາບັນການທະນາຄານ ຄົບຮອບ 40 ປີ; ❹ ຈັດພິທີປາຖະກະຖາ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 70 ປີ ແລະ ❺ ເຂົ້າຮ່ວມຮັບຟັງປາຖະກະຖາລະນຶກວັນໄຊຊະນະການປະຕິວັດກູບາ ຄົບຮອບ 60 ປີ.

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຈັດຕັ້ງປະຕິບັດ 08 ມາດຕະການຊຸກຍູ້ເສດຖະກິດທີ່ຕິດພັນກັບ ທຫລ;
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ;
- ສືບຕໍ່ຄົ້ນຄວ້າ ນໍາສະເໜີແຜນພິມເງິນ ເພື່ອກະຕຸ້ນເສດຖະກິດ ຕາມແຜນເງິນຕາປະຈໍາປີ 2019 ທີ່ໄດ້ກໍານົດໄວ້;

**ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:**❶ ກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານແຜນການ ແລະ ການເງິນປະຈໍາປີ 2018;❷ ກອງປະຊຸມປຶກສາຫາລືກ່ຽວກັບບັນຊີກົດຈະການຄວບຄຸມຂອງຂະແໜງການທະນາຄານ;❸ ກອງປະຊຸມຮ່ວມມືສອງຝ່າຍຮ່ວມກັບທະນາຄານແຫ່ງລັດ ສສ ຫວຽດ;❹ ກອງປະຊຸມຄະນະຈັດຕັ້ງປະມູນອຸປະກອນພື້ນຖານໂຄງລ່າງໄອທີຂອງ ທະນາຄານແຫ່ງ ສປປ ລາວ;❺ ກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານບາເຊວໃນໄລຍະຜ່ານມາ ແລະ ແຜນການຕໍ່ໜ້າລວມທັງການຄັດເລືອກທະນະຄານຕົວແບບ;❻ ກອງປະຊຸມເຜີຍແຜ່ລະບຽບການຄຸ້ມຄອງເວັບໄຊ ແລະ ການແນະນໍາການນໍາໃຊ້ເວັບໄຊໃໝ່ໃຫ້ກັບບັນດາກົມ-ທຽບເທົ່າກົມ ແລະ ສາຂາ ທຫລ ແລະ ❼ ກອງປະຊຸມຮຽບຮຽງຮ່າງກົດໝາຍວ່າດ້ວຍທະນາຄານທຸກິດ ພາຍຫຼັງຮັບຮອງຈາກສະພາແຫ່ງຊາດ.

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ສຸກັນ ຈັນທະວົງ